Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

Building a better working world

ເລກທີ: 60904110/17291578

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນຂອງທະນາຄານ ລາວ-ຝຣັ່ງ ຈຳກັດ ທີ່ນັບຖື

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ລາວ - ຝຣັ່ງ ຈຳກັດ (ໃນນີ້ເອີ້ນວ່າ "ທະນາຄານ") ດັ່ງທີ່ໄດ້ລະບຸໄວ້ແຕ່ໜ້າ 6 ຫາ 34 ເຊິ່ງປະກອບດ້ວຍ ໃບສະຫລຸບຊັບສິນບັດ ນະວັນທີ 31 ທັນວາ 2014, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດໃນວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການທະນາຄານມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງຕາມກົດໝາຍການບັນຊີ ແລະ ລະບຽບການທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ຮັບຜິດຊອບຕໍ່ການຄຸ້ມຄອງພາຍໃນທີ່ທາງຄະນະອຳນວຍການເຫັນວ່າຈຳເປັນເພື່ອໃຫ້ສາມາດກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ, ບໍ່ມີການເຊື່ອງອຳ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຂໍ້ຜິດພາດ.

ຄວາມຮັບຜິດຊອບຂອງນັກກວດສອບ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນການສະແດງຄຳເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ໂດຍອີງຕາມຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ປະຕິບັດການກວດສອບຕາມມາດຕະຖານການກວດສອບສາກົນ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ ແລະ ພວກຂ້າພະເຈົ້າກໍ່ໄດ້ວາງແຜນ ແລະ ດຳເນີນການກວດສອບເພື່ອຮັບປະກັນຄວາມສົມເຫດສົມຜົນວ່າເອກະສານລາຍງານການເງິນບໍ່ມີຂໍ້ຜິດພາດອັນໃຫຍ່ຫລວງ.

ການກວດສອບລວມມີຂັ້ນຕອນການດຳເນີນການກວດສອບ, ຫລັກຖານຢັ້ງຢືນກ່ຽວກັບຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫລວງໃນເອກະສານລາຍງານການເງິນວ່າເກີດຈາກການສໍ້ໂກງ ຫລື ຍ້ອນການຈົດກ່າຍຜິດ. ໃນການປະເມີນຄວາມສ່ຽງເຫລົ່ານັ້ນ, ນັກກວດສອບໄດ້ພິຈາລະນາເຖິງການຄຸ້ມຄອງພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດສົມຜົນຕາມສະພາບການ, ແຕ່ບໍ່ແມ່ນເພື່ອຈຸດປະສົງສະແດງຄຳເຫັນທີ່ມີຜົນຕໍ່ການຄຸ້ມຄອງພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະ�โยบายບັນຊີທີ່ໄດ້ນຳໃຊ້ ແລະ ການຄາດຄະເນອັນເໝາະສົມດ້ານການບັນຊີຂອງຄະນະອຳນວຍການ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າຫລັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

Building a better working world

ຄຳເຫັນ

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ຍຸດຕິທຳກ່ຽວກັບຖານະການເງິນຂອງທະນາຄານ ລາວ - ຝຣັ່ງ ຈຳກັດ ນະວັນທີ 31 ທັນວາ 2014 ລວມທັງຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີທີ່ສິ້ນສຸດໃນວັນທີດັ່ງກ່າວ ອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

Ernst & Young Laos

ການ ເງິນ ກະຊວງ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ERNST & YOUNG LAO CO.,LTD ນະຄອນ ຫລວງ ວຽງຈັນ

ນະຄອນຫລວງວຽງຈັນ, ສປປ ລາວ

31 ມີນາ 2015

ທະນາຄານ ລາວ-ຝຣັ່ງ ຈຳກັດ

ใบลายงานผินได้ธับ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

ລຳດັບ	ລາຍການ	ບົດອະທິບາຍເລກທີ	2014 ລ້ານກີບ	2013 ລ້ານກີບ
A.	**ລາຍຮັບ ແລະ ລາຍຈ່າຍໃນການດຳເນີນງານ**			
1.	**ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**56,029**	**51,778**
1.1	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍລະຫວ່າງ ທະນາຄານ		1,372	1,972
1.2	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກລູກຄ້າ		45,614	33,408
1.3	ລາຍຮັບດອກເບ້ຍ ແລະ ລາຍຮັບອື່ນໆທີ່ຄ້າຍຄືດອກເບ້ຍ		9,043	16,398
2.	**ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**(17,123)**	**(11,144)**
2.1	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍລະຫວ່າງ ທະນາຄານ		(6,475)	(3,651)
2.2	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບລູກຄ້າ		(10,648)	(7,493)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**	3	**38,906**	**40,634**
3	**ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ**	4	**9,524**	**6,689**
4	**ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ**	4	**(3,646)**	**(1,382)**
5	**ກຳໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ**		**4,399**	**3,530**
II.	**ລາຍຮັບສຸດທິຈາກການດຳເນີນງານ**		**49,183**	**49,471**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
6	**ລາຍຮັບອື່ນໆຈາກການດຳເນີນງານ**		**3,390**	**428**
7	**ລາຍຈ່າຍຄ່າບໍລິຫານທົ່ວໄປ**		**(37,026)**	**(33,049)**
7.1	ລາຍຈ່າຍເງິນເດືອນ ແລະ ອື່ນໆທີ່ກ່ຽວຂ້ອງກັບພະນັກງານ	5	(14,028)	(11,276)
7.2	ລາຍຈ່າຍຄ່າບໍລິຫານອື່ນໆ	6	(22,998)	(21,773)
8	**ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ**		**(7,807)**	**(7,363)**
9	**ລາຍຈ່າຍອື່ນໆຈາກການດຳເນີນງານ**	7	**(3,491)**	**(1,331)**
10	**ເງິນແຮສຸດທິສຳລັບໜີ້ທວງຍາກ**	12.2	**367**	**(1,996)**
10.1	ລາຍຈ່າຍເງິນແຮສຳລັບໜີ້ຕ້ອງຮັບທວງຍາກ		(4,438)	(1,996)
10.2	ເກັບຄືນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ		4,805	-

ທະນາຄານ ລາວ-ຝຣັ່ງ ຈຳກັດ

ใบลายงานผินได้ธับ (ต่ำ)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

ລຳດັບ	*ລາຍການ*	*ບົດອະທິບາຍເລກທີ*	*2014 ລ້ານກີບ*	*2013 ລ້ານກີບ*
III.	ລວມຍອດກຳໄລກ່ອນອາກອນ		**4,616**	**6,160**
11	ອາກອນກຳໄລພາຍໃນປີ	**17**	**(425)**	**-**
IV.	ກຳໄລຫຼັງຫັກອາກອນ		**4,191**	**6,160**

ກະກຽມໂດຍ:

ທ່ານ ນາງ. Annette Philaphandeth
ຫົວໜ້າຝ່ายການເງິນ

ອະນຸມັດໂດຍ:

ທ່ານ. Guillaume Perdon
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2014

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2014

ລຳດັບ	ຊັບສິນ	ບົດອະທິບາຍເລກທີ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
I	**ເງິນສົດ ແລະ ເງິນຝາກ ຢູ່ທະນາຄານ**		**252,987**	**168,826**
1	ເງິນສົດໃນກຳມື	8	69,169	51,215
2	ເງິນຝາກຢູ່ທະນາຄານ	9	183,818	117,611
II	**ໜີ້ຕ້ອງຮັບຈາກທະນາຄານອື່ນ**		**304,730**	**190,324**
1	ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	10.1	247,475	70,189
2	ເງິນຝາກມີກຳນົດ	10.2	57,255	120,135
III	**ລົງທຶນໃນຫລັກຊັບ**	**11**	**20,000**	**222,000**
1	ຫລັກຊັບປະເພດຖືໄວ້ຈົນຄົບກຳນົດ		20,000	222,000
IV	**ເງິນກູ້ໃຫ້ແກ່ລູກຄ້າ (ຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ)**	**12**	**525,533**	**443,898**
V	**ຊັບສິນບັດຄົງທີ່**		**40,486**	**39,650**
1	ການກໍ່ສ້າງພວມດຳເນີນ		103	2,103
2	ຊັບສິນບັດຄົງທີ່ບໍ່ມີຕົວຕົນ	13.1	4,528	127
3	ຊັບສິນບັດຄົງທີ່ມີຕົວຕົນ	13.2	35,855	37,420
VI	**ຊັບສິນອື່ນໆ**		**47,019**	**43,944**
1	ດອກເບ້ຍຄ້າງຮັບ		3,510	11,276
2	ຊັບສິນອື່ນໆ	14	43,509	32,668
	ລວມຊັບສິນ		**1,190,755**	**1,108,642**

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

ລຳດັບ	ໜີ້ສິນ ແລະ ທຶນ	ບົດອະທິບາຍເລກທີ່	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
I	**ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ**	**15**	**322,577**	**377,965**
1	ເງິນຝາກກະແສລາຍວັນ		95,498	120,000
2	ເງິນຝາກປະຈຳ		132,533	123,827
3	ການກູ້ຢືມຈາກທະນາຄານອື່ນ		92,277	133,980
4	ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ		2,269	158
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	**16**	**557,046**	**426,553**
1	ເງິນຝາກກະແສລາຍວັນ ແລະ ຝາກປະຢັດ		384,181	301,706
2	ເງິນຝາກມີກຳນົດ		162,025	115,582
3	ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ		10,840	9,265
III	**ໜີ້ສິນອື່ນໆ**		**11,073**	**8,572**
1	ດອກເບ້ຍຄ້າງຈ່າຍ		5,462	3,924
2	ອາກອນຄ້າງຈ່າຍ	17.1	481	118
3	ໜີ້ສິນອື່ນໆ	18	5,130	4,530
	ລວມຍອດໜີ້ສິນ		**890,696**	**813,090**
IV	**ທຶນ ແລະ ຄັງສຳຮອງ**			
1	ທຶນຈົດທະບຽນຖອກແລ້ວ		300,000	300,000
2	ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ	12.2	2,668	2,352
3	ຂາດທຶນສະສົມ		(2,609)	(6,800)
	ລວມຍອດທຶນ		**300,059**	**295,552**
	ລວມຍອດໜີ້ສິນ ແລະ ທຶນ		**1,190,755**	**1,108,642**

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

ລຳດັບ	ລາຍການນອກໃບສະຫຼຸບຊັບສິນບັດ	ບົດອະທິບາຍເລກທີ	31 ທັນວາ 2014 ລ້ານກີບ	31 ທັນວາ 2013 ລ້ານກີບ
I	**ຄຳໝັ້ນສັນຍາທີ່ໄດ້ໃຫ້**			
A	**ຄຳໝັ້ນສັນຍາທາງການເງິນທີ່ໄດ້ໃຫ້**		**10,698**	**19,831**
1	ຄຳໝັ້ນສັນຍາທາງການເງິນໃຫ້ແກ່ລູກຄ້າ		10,698	19,831
B	**ຄຳໝັ້ນສັນຍາຄ້ຳປະກັນ**		**11,476**	**16,203**
1	ຄຳໝັ້ນສັນຍາຄ້ຳປະກັນໃຫ້ແກ່ລູກຄ້າ		11,476	16,203
	ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້		**22,174**	**36,034**
II	**ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ**			
A	**ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້**		**1,447,356**	**1,028,062**
1	ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ໃຫ້ແກ່ລູກຄ້າ		1,447,356	1,028,062
B	**ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບການຄ້ຳປະກັນ**		**266**	**29**
1	ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບການຄ້ຳປະກັນໃຫ້ແກ່ລູກຄ້າ		266	29
	ລວມຍອດຫຼັກຊັບຄ້ຳປະກັນ ແລະ ການຈຳນອງ		**1,447,622**	**1,028,091**

ກະກຽມໂດຍ:

ທ່ານ ນາງ Annette Philaphandeth
ຫົວໜ້າຝ່ າຍການເງິນ

ອະນຸມັດໂດຍ:

ທ່ານ Guillaume Perdon
ຜູ້ອຳນວຍການໃຫຍ່

ທະນາຄານ ລາວ-ຝຣັ່ງ ຈຳກັດ Banque Franco-Lao Ltd ນະຄອນ ຫລວງ ວຽງຈັນ ສປປ ລາວ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2015

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບລາຍງານການປ່ຽນແປງທຶນຕົນເອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

	ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ	*ເງິນແຮທົ່ວໄປສຳລັບການ ສູນເສຍເງິນກູ້ລວມ ລ້ານກີບ*	*ຂາດທຶນສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 31 ທັນວາ 2012	**300,000**	**1,234**	**(12,960)**	**288,274**
ກຳໄລສຸດທິພາຍໃນປີ	-	-	6,160	6,160
ເພີ່ມຂຶ້ນສຸດທິໃນເງິນແຮທົ່ວໄປພາຍໃນປີ	-	1,118	-	1,118
ຍອດເຫຼືອນະວັນທີ 31 ທັນວາ 2013	**300,000**	**2,352**	**(6,800)**	**295,552**
ກຳໄລສຸດທິພາຍໃນປີ	-	-	4,191	4,191
ເພີ່ມຂຶ້ນສຸດທິໃນເງິນແຮທົ່ວໄປພາຍໃນປີ	-	316	-	316
ຍອດເຫຼືອ ນະວັນທີ 31 ທັນວາ 2014	**300,000**	**2,668**	**(2,609)**	**300,059**

ກະກຽມໂດຍ:

ທ່ານ ນາງ Annette Philaphandeth
ຫົວໜ້າຝ່ າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2015

ອະນຸມັດໂດຍ:

ທ່ານ Guillaume Perdon
ຜູ້ອຳນວຍການໃຫຍ່